ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ກະຊວງອຸດສາຫະກຳ ແລະ ການຄ້າ

ເລກທີ 710 /ອຄ.ກຂອ

ນະຄອນຫລວງວຽງຈັນ, ວັນທີ 07 MAY 2008

# ແຈ້ງການ

ເຖິງ : ທ່ານ ຫົວໜ້າພະແນກອຸດສາຫະກຳ ແລະ ການຄ້າແຂວງ, ນະຄອນຫລວງ.

ເລື່ອງ : ການຈັດຕັ້ງປະຕິບັດກ່ຽວກັບລາຄາພັນທະໄມ້ຄຸ້ມຄອງທ່ອນນ້ອຍ (ໜ້າຕ້າງນ້ອຍ).

- ອີງຕາມ ຄຳສັ່ງ ເລກທີ 30/ນຍ ລົງວັນທີ 17/8/2007 ຂອງນາຍົກລັດຖະມົນຕີ ກ່ຽວກັບການເພີ່ມທະວີຄວາມເຂັ້ມງວດໃນການຄຸ້ມຄອງປ່າໄມ້ ແລະ ທຸລະກິດໄມ້ ປະຈຳ ສົກປີ 2007-2008.
- ອີງຕາມຂໍ້ຕົກລົງຂອງລັດຖະມົນຕີ ວ່າການ ກະຊວງກະສິກຳ ແລະ ປ່າໄມ້ ເລກທີ 0116/ກປ.07 ລົງວັນທີ 17/05/07 ວ່າດ້ວຍລະບຽບການວັດແທກໄມ້ທ່ອນ, ຕໍໄມ້, ປູດໄມ້ ແລະ ການຈັດຊັ້ນຄຸນນະພາບໄມ້ທ່ອນ.
- ເພື່ອເຮັດໃຫ້ວຽກງານການທຸລະກິດໄມ້ ຖືກຈັດຕັ້ງປະຕິບັດໃຫ້ໄດ້ຮັບຜົນດີ ແລະ ມີປະສິດທິຜົນສູງ, ຮັບປະກັນຜົນປະໂຫຍດຂອງລັດ ແລະ ຜູ້ປະກອບການ ກໍສາມາດດຳເນີນທຸລະກິດໄດ້.

ກະຊວງອຸດສາຫະກຳ ແລະ ການຄ້າ ແຈ້ງການ ກ່ຽວກັບ ລາຄາພັນທະໄມ້ຄຸ້ມຄອງທ່ອນນ້ອຍ (ໜ້າຕ້າງນ້ອຍ) ດັ່ງນີ້ :

1. ຈຸດປະສົງ :
   - ເຮັດໃຫ້ການນຳໃຊ້ຊັບພະຍາກອນປ່າໄມ້ໃຫ້ມີປະສິດທິຜົນໃນການປຸງແຕ່ງເປັນສິນຄ້າ ແລະ ໃຫ້ມີຄຸນຄ່າ.
   - ຫລີກລ້ຽງການຈູດເຜົາຖິ້ມ ຫລືປະໃຫ້ເນົ່າເປື່ອຍ.
   - ລັດຈະໄດ້ເພີ່ມຄ່າອາກອນ, ການສ້າງວຽກເຮັດງານທຳ, ການຈຳໜ່າຍສິນຄ້າ ແລະ ການບໍລິການ ຕ່າງໆ.
2. ຄຸນລັກສະນະຂອງໄມ້ຄຸ້ມຄອງທ່ອນນ້ອຍ (ໜ້າຕ້າງນ້ອຍ) ສຳລັບການປຸງແຕ່ງ :

   2.1. ໄມ້ທ່ອນນ້ອຍເປັນໄມ້ທີ່ປີການຈະເລີນເຕີບໂຕຍັງອ່ອນ, ຄວາມໜາແໜ້ນບໍ່ສູງ, ການຍຶດຢຸ່ນບໍ່ດີ ແລະ ຍຸບຕົວສູງ ໃນເວລາຜ່ານຂະບວນການປຸງແຕ່ງ.

   2.2. ໂຄງປະກອບສ້າງຂອງໄມ້ທ່ອນນ້ອຍຈະມີເປືອກ ແລະນອກໜາໃຫຍ່ ແລະ ອົມໃສ້ທາງກາງຂອງທ່ອນໄມ້, ສ່ວນແກນຂອງເນື້ອໄມ້ທີ່ນຳໃຊ້ໃນການປຸງແຕ່ງຈະນ້ອຍ.

2.3. ການຂຸດຄົ້ນ ແລະ ທ້ອນໂຮມມີຄ່າສົ້ນເປືອງສູງຖ້າທຽບກັບໄມ້ທ່ອນໃຫຍ່.

3. ລາຄາພັນທະໄມ້ຄຸ້ມຄອງທ່ອນນ້ອຍ ຢູ່ສະໜາມ II ປະກອບດ້ວຍ :

3.1. ຄ່າບູລະນະປ່າໄມ້

3.2. ຄ່າຊັບພະຍາກອນປ່າໄມ້

3.3. ຄ່າສຳຫລວດ (ສຳຫລວດຈັດສັນປ່າ, ສຳຫລວດກ່ອນການຂຸດຄົ້ນ, ກະກຽມແຜນການຂຸດຄົ້ນ, ໝາຍຕົ້ນຕັດ, ປະເມີນຜົນຫລັງການຂຸດຄົ້ນ)

3.4. ຄ່າພັນທະປູກໄມ້ແທນຄືນ

- ລາຄາດັ່ງກ່າວ ບໍ່ໄດ້ລວມເອົາຄ່າຂຸດຄົ້ນ, ລາກແກ່ ມາຮອດສະໜາມສອງ ແລະ ອາກອນຕ່າງໆ ເຂົ້ານຳ.

4. ລາຄາພັນທະໄມ້ຄຸ້ມຄອງທ່ອນນ້ອຍ ແຕ່ລະຊະນິດໄດ້ກຳນົດຕາມຂະໜາດໜ້າຕ້າງໃນຕາຕະລາງທີ່ຄັດຕິດມາພ້ອມນີ້.

5. ລາຄາພັນທະໄມ້ຄຸ້ມຄອງທ່ອນນ້ອຍນີ້ ກຳນົດເອົາແຕ່ໄມ້ຄຸ້ມຄອງ I, II, III ເທົ່ານັ້ນ.

6. ລາຄາພັນທະໄມ້ຄຸ້ມຄອງທ່ອນນ້ອຍ ແມ່ນໃຫ້ຄິດໄລ່ເປັນເງິນໂດລາສະຫະລັດ, ສ່ວນການຊຳລະສະສາງຕົວຈິງນັ້ນ ແມ່ນຊຳລະເປັນເງິນກີບ ຫລື ເງິນສະກຸນອື່ນກໍ່ໄດ້ ໂດຍອີງໃສ່ອັດຕາແລກປ່ຽນຂອງທະນາຄານໃນມື້ ຊຳລະສະສາງ.

7. ລາຄາພັນທະໄມ້ຄຸ້ມຄອງທ່ອນນ້ອຍທີ່ກຳນົດໃນຕາຕະລາງແມ່ນລາຄາຕ່ຳສຸດເພື່ອເປັນພື້ນຖານໃນການປະມູນ.

8. ລາຄາໄມ້ຄຸ້ມຄອງທ່ອນນ້ອຍແມ່ນໃຫ້ຄິດໄລ່ເປັນແມັດກ້ອນ ແລະຄິດໄລ່ນ້ຳໜັກເປັນໂຕນ ລະອຽດໃນຕາຕະລາງ.

9. ການຄິດໄລ່ມູນຄ່າຂາຍ ໃຫ້ອີງຕາມຜົນການຂຶ້ນບັນຊີໄມ້ຕົວຈິງ ຢູ່ສະໜາມ II ຈາກຂະແໜງການ ກະສິກຳ ແລະ ປ່າໄມ້ ໂດຍມີການຢັ້ງຢືນຈາກຂະແໜງອຸດສາຫະກຳ ແລະ ການຄ້າ.

ແຈ້ງການດັ່ງກ່າວ ມີຜົນສັກສິດນັບແຕ່ມື້ລົງລາຍເຊັນເປັນຕົ້ນໄປ.

ດັ່ງນັ້ນ, ຈຶ່ງແຈ້ງມາຍັງ ທ່ານ ເພື່ອຈັດຕັ້ງປະຕິບັດຕາມນີ້.

ລັດຖະມົນຕີ ວ່າການ

ກະຊວງອຸດສາຫະກຳ ແລະ ການຄ້າ,

ດຣ. ນາມ ວິຍະເກດ

# ຕາຕະລາງ ລາຄາພັນທະໄມ້ຄຸ້ມຄອງທ່ອນນ້ອຍ ສົກປີ 2007/2008

| ລ/ດ | ຊະນິດໄມ້ | ຊື່ ວິທະຍາສາດ | ຕ່ຳກວ່າຂະໜາດ | ລາຄາ $/ໂຕນ | ຂະໜາດ | ລາຄາ $/ມ3 |
|---|---|---|---|---|---|---|
| 1 | ຄຸ້ມຄອງ I | | | | | |
| 1 | ໄມ້ບາກ | Sindora cochinchinensis | <28ຊມ | 7 | 28-30 ຊມ | 29 |
| | ໄມ້ແຕ້ | | <18 ຊມ | 7 | 18-28 ຊມ | 29 |
| | ໄມ້ຮາວ | | <22 ຊມ | 7 | 22-30 ຊມ | 29 |
| 2 | ໄມ້ຊີຂາວ | Shorea Vulgaris | <20 ຊມ | 7 | 20-30 ຊມ | 29 |
| | ໄມ້ຊີດົງ | Vatica Cinera | <18 ຊມ | 7 | 18-28 ຊມ | 29 |
| | ໄມ້ຊີເປືອກບາງ | Vatica Dyeri | <16 ຊມ | 7 | 16-26 ຊມ | 29 |
| 3 | ໄມ້ແຄນຫີນ | Hopea Ferrea | <20 ຊມ | 7 | 20-30 ຊມ | 24 |
| 4 | ໄມ້ຍາງ | Dipterocarpus | <28 ຊມ | 7 | 28-30 ຊມ | 32 |
| 5 | ໄມ້ຈິກດົງ | Shorea hypochra | <18 ຊມ | 7 | 18-28 ຊມ | 24 |
| | ໄມ້ຈິກໂຄກ | Shorea obtusa | <14 ຊມ | 7 | 14-24 ຊມ | 24 |
| | ໄມ້ເຊືອກ | Terminalia tomentosa | <16 ຊມ | 7 | 16-26 ຊມ | 24 |
| 6 | ໄມ້ຍົມຜາ | Allanthus fauveliana | <19 ຊມ | 7 | 19-29 ຊມ | 22 |
| | ໄມ້ແຫນ | Terminalia belerica | <18 ຊມ | 7 | 18-28 ຊມ | 22 |
| | ໄມ້ແດງນ້ຳ | Xylia dolarifomis | <21 ຊມ | 7 | 21-30 ຊມ | 22 |
| | ໄມ້ລຽງ | Berrya mollis | <17 ຊມ | 7 | 17-27 ຊມ | 22 |
| 7 | ໄມ້ຮັງ | Pentacme siamensis | <16 ຊມ | 7 | 16-26 ຊມ | 22 |
| | ໄມ້ຊາດ | Dipterocarpus obtusifolium | <14 ຊມ | 7 | 14-24 ຊມ | 22 |
| | ໄມ້ຍາງສະແບງ | Dipterocarpus intricatus | <22 ຊມ | 7 | 22-30 ຊມ | 22 |
| | ໄມ້ຝາງແດງ | Caesalpinia sappan | <18 ຊມ | 7 | 18-28 ຊມ | 22 |
| | ໄມ້ມ່ວງປ່າ | Artocarpus lancefolius | <20 ຊມ | 7 | 20-30 ຊມ | 22 |
| | ໄມ້ສີງເປືອຍຂາວ | Adina cordifolia | <18 ຊມ | 7 | 18-28 ຊມ | 22 |
| | ໄມ້ແຕ້ໜາມ | Sindora siamensis | <18 ຊມ | 7 | 18-28 ຊມ | 22 |
| | ໄມ້ຍົມຫອມ | Toona febrifuga | <19 ຊມ | 7 | 19-29 ຊມ | 22 |
| | ໄມ້ຍົມຫີນ | Chukrasia tabularis | <19 ຊມ | 7 | 19-29 ຊມ | 22 |
| | ໄມ້ເປືອຍຂາວ | Lagerstroemia floribunda | <16 ຊມ | 7 | 16-26 ຊມ | 22 |
| | ໄມ້ເປືອຍໂຄກ | Lagerstroemia cochinchinenis | <16 ຊມ | 7 | 16-26 ຊມ | 22 |
| | ໄມ້ເຕັ່ນ | Duabanga sonneratiodes | <22 ຊມ | 7 | 22-30 ຊມ | 22 |
| 2 | ໄມ້ຄຸ້ມຄອງ II | | | | | |
| 1 | ໄມ້ອີໄຄ | Cinnamomum iners | <17 ຊມ | 6 | 17-27 ຊມ | 18 |
| 2 | ໄມ້ກຸງ | Dipterocarpus tuberculatus | <16 ຊມ | 6 | 16-26 ຊມ | 16 |

| | | | | | |
|---|---|---|---|---|---|
| | Gmelia arborea | <18 ຊມ | 6 | 18-28 ຊມ | 16 |
| ຝອຍ | Stereospermum fimbriatum | <17 ຊມ | 6 | 17-27 ຊມ | 16 |
| ຟາງ ຫຼື ໄມ້ສະຄານ | Peltophorum dasyrachis | <16 ຊມ | 6 | 16-26 ຊມ | 16 |
| | Irvingia cambodiana | <18 ຊມ | 6 | 18-28 ຊມ | 16 |
| ໄລ້ນ | Albissia codoratisma | <18 ຊມ | 6 | 18-28 ຊມ | 16 |
| ດ | Pentace burmanica | <17 ຊມ | 6 | 17-27 ຊມ | 16 |
| ແພບ | Diallum SP | <20 ຊມ | 6 | 20-30 ຊມ | 19 |
| ກຈອງບານ | Sterculia lychnophora | <18 ຊມ | 6 | 18-28 ຊມ | 19 |
| ກົາຊ້າງ ຫຼື ໄມ້ຫຸ່ນ | Dialium cochinchinensis Melia azedarach | <18 ຊມ | 6 | 18-28 ຊມ | 19 |
| | | <14 ຊມ | 6 | 14-24 ຊມ | 19 |
| | Sandoricum Indicum | <18 ຊມ | 6 | 18-28 ຊມ | 19 |
| ອງ III | | | | | |
| | Bombax spp | <22 ຊມ | 5 | 22-30 ຊມ | 18 |
| | Castanopsis hystrix | <17 ຊມ | 5 | 17-27 ຊມ | 18 |
| ອງ | Millingtonia paniculata | <16 ຊມ | 5 | 16-26 ຊມ | 18 |
| ຫຼືອງ | Nauclea orientalis | <14 ຊມ | 5 | 14-24 ຊມ | 18 |
| | Artocarpus lakoocha Anogeiss | <18 ຊມ | 5 | 18-28 ຊມ | 18 |
| ອມ | Acuminata | <18 ຊມ | 5 | 18-28 ຊມ | 18 |
| | Pterospermum megalocarpum | <18 ຊມ | 5 | 18-28 ຊມ | 18 |
| | Shorea thorelll | <17 ຊມ | 5 | 17-27 ຊມ | 18 |
| | Holarrhaena antidysenterica | <11 ຊມ | 5 | 11-21 ຊມ | 14 |
| | Wrightia tomemtosa | <8 ຊມ | 5 | 8-18 ຊມ | 14 |
| | Alstonia scholaris | <18 ຊມ | 5 | 18-28 ຊມ | 14 |
| | Terminalia chebula vancitrina | <16 ຊມ | 5 | 16-26 ຊມ | 14 |
| | Tetrameles nudiflora | <22 ຊມ | 5 | 22-30 ຊມ | 14 |
| | Sterculia foetida | <16 ຊມ | 5 | 16-26 ຊມ | 14 |
| | Vitex pinnata | <14 ຊມ | 5 | 14-24 ຊມ | 14 |
| | Cratexylon prunifolium | <6 ຊມ | 5 | 6-16 ຊມ | 14 |
| | Spondias pinnata | <16 ຊມ | 5 | 16-26 ຊມ | 14 |
| | Protium serratum | <17 ຊມ | 5 | 17-27 ຊມ | 14 |
| | Amoora polystachya xerosperi | <14 ຊມ | 5 | 14-24 ຊມ | 14 |
| | Lagorstroemia macrocarpa | <14 ຊມ | 5 | 14-24 ຊມ | 14 |
| | Vitex altisima | <14 ຊມ | 5 | 14-24 ຊມ | 14 |
| | Lacticum | <17 ຊມ | 5 | 17-27 ຊມ | 14 |